ສຽງຈາກພູຫົ້ວປູນ

ເລື່ອງລາວການປົກປັກຮັກສາອຸທິຍານແຫ່ງຊາດຫີນໝາມໝໍ່

ໂດຍແມ່ຍິງ ເມືອງ ບໍ່ລະພາ, ແຂວງ ຄຳມ່ວນ



ພິມເຜີຍແຜ່ໂດຍ:

ສະຫະພັນແມ່ຍິງເມືອງ ບໍ່ອລະພາ
ຕຶກຫ້ອງວ່າການເມືອງ ບໍ່ອລະພາ, ບ້ານ ນາພະນັ້ງ, ເມືອງ ບໍ່ອລະພາ, ແຂວງ ຄຳມ່ວນ, ສປປ ລາວ
ໂທ +856 20 92729324
ອີເມວ: Larmamanakheoluedeth@gmail.com

Deutsche Gesellschaft für Internationale Zusammenarbeit GmbH (GIZ)
ໂຄງການ ປົກປັກຮັກສາ ແລະ ນຳໃຊ້ລະບົບນິເວດປ່າໄມ້ ແລະ ຊີວະນາໆພັນ ແບບຍືນຍົງ (ProFEB)
ຖະໜົນອາຊຽນ, ບ້ານ ສີດຳດອນ, ເມືອງ ຈັນທະບຸລີ, ນະຄອນຫຼວງວຽງຈັນ, ສປປ ລາວ
ໂທ +856 21 253 824,; ແຟັກ +856 21 255 263
ອີເມວ: giz-laos@giz.de
ເວັບໄຊ: www.giz.de/laos (ອັງກິດ); www.giz.de/laos-la (ລາວ), https://hinnamno.org/, https://flegtlaos.com/

ໜ່ວຍງານ ສົ່ງເສີມການພັດທະນາຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ, ຄະນະວິທະຍາສາດປ່າໄມ້, ມະຫາວິທະຍາໄລແຫ່ງຊາດ
ວິທະຍາເຂດ ດົງໂດກ, ເມືອງ ໄຊທານີ, ນະຄອນຫຼວງວຽງຈັນ, ສປປ ລາວ
ໂທ +856 21 770 813, 770 097
ແຟັກ +856 21 770 294
ອີເມວ: fofadmin@nuol.deu.la

ທັນວາ 2025

ນິທານແຕ່ງໂດຍ:

1. ນິດຕະຍາ ວົງສິດ	ວິຊາການ ກອງຄຸ້ມຄອງອຸທິຍານແຫ່ງຊາດຫີນໝາມໝໍ່, ເມືອງ ບໍ່ອລະພາ, ແຂວງ ຄຳມ່ວນ
2. ສົມພອນ ພັນໂຄດສົມບັດ	ຮອງຫົວໜ້າຫ້ອງການວັດທະນະທຳ ແລະ ທ່ອງທ່ຽວເມືອງ, ເມືອງ ບໍ່ອລະພາ, ແຂວງ ຄຳມ່ວນ
3. ລັດຕະນະໄຕ ໄຊຍະເກສອນ	ວິຊາການ ຫ້ອງການກະສິກຳ ແລະ ສິ່ງແວດລ້ອມເມືອງ, ເມືອງ ບໍ່ອລະພາ, ແຂວງ ຄຳມ່ວນ
4. ພຸດທາ ພົມມະເສນ	ວິຊາການ ຫ້ອງການກະສິກຳ ແລະ ສິ່ງແວດລ້ອມເມືອງ, ເມືອງ ບໍ່ອລະພາ, ແຂວງ ຄຳມ່ວນ

ຄູ່ມືການນຳໃຊ້ຊັບພະຍາກອນທຳມະຊາດ ຮຽບຮຽງໂດຍ:

1. ວຽງລ້ອມ ຊຽງຄຳຂຽວລິດເດດ	ປະທານ ສະຫະພັນແມ່ຍິງເມືອງ, ເມືອງ ບໍ່ອລະພາ, ແຂວງ ຄຳມ່ວນ
2. ສົມພອນ ພັນໂຄດສົມບັດ	ຮອງຫົວໜ້າຫ້ອງການວັດທະນະທຳ ແລະ ການທ່ອງທ່ຽວ, ເມືອງ ບໍ່ອລະພາ, ແຂວງ ຄຳມ່ວນ
3. ນອນຈັນ ແກ້ວມະນີ	ຮອງປະທານ ສະຫະພັນກຳມະບານເມືອງ, ເມືອງ ບໍ່ອລະພາ, ແຂວງ ຄຳມ່ວນ
4. ຄຸນມາ ໄຊຍະວົງ	ວິຊາການ ສະຫະພັນແມ່ຍິງເມືອງ, ເມືອງ ບໍ່ອລະພາ, ແຂວງ ຄຳມ່ວນ
5. ນິດຕະຍາ ວົງສິດ	ວິຊາການ ກອງຄຸ້ມຄອງອຸທິຍານແຫ່ງຊາດຫີນໝາມໝໍ່, ເມືອງ ບໍ່ອລະພາ, ແຂວງ ຄຳມ່ວນ
6. ຄຶດທະນຸສອນ ຖາຊານິນ	ວິຊາການ ຫ້ອງການກະສິກຳ ແລະ ສິ່ງແວດລ້ອມເມືອງ, ເມືອງ ບໍ່ອລະພາ, ແຂວງ ຄຳມ່ວນ
7. ລັດຕະນະໄຕ ໄຊຍະເກສອນ	ວິຊາການ ຫ້ອງການກະສິກຳ ແລະ ສິ່ງແວດລ້ອມເມືອງ, ເມືອງ ບໍ່ອລະພາ, ແຂວງ ຄຳມ່ວນ
8. ພຸດທາ ພົມມະເສນ	ວິຊາການ ຫ້ອງການກະສິກຳ ແລະ ສິ່ງແວດລ້ອມເມືອງ, ເມືອງ ບໍ່ອລະພາ, ແຂວງ ຄຳມ່ວນ

ກອດເກ່ໂດຍ:

1. ສົມສະນຸກ ອັກຄະວົງ	ອາຈານທີ່ປຶກສາ, ຄະນະວິທະຍາສາດປ່າໄມ້, ມະຫາວິທະຍາໄລແຫ່ງຊາດ
2. ວິດາລັດ ວົງນະໄລສານ	ທີ່ປຶກສາໂຄງການ (GIZ ProFEB)

ອອກແບບໂດຍ:


1. ກໍ່ເພັດ ສິດທິວົງ	ອາຈານທີ່ປຶກສາ, ຄະນະວິທະຍາສາດປ່າໄມ້, ມະຫາວິທະຍາໄລແຫ່ງຊາດ
2. ນິດຕະຍາ ວົງສິດ	ວິຊາການ ກອງຄຸ້ມຄອງອຸທິຍານແຫ່ງຊາດ ຫີນໝາມໝໍ່, ເມືອງ ບໍ່ອລະພາ, ແຂວງ ຄຳມ່ວນ

ແຕ້ມໂດຍ:

Mind Media.

ພິມທີ່:

ໂຮງພິມ ປານຄຳ ຈຳປາ.



ເນື່ອງຈາກປຶ້ມຫົວນີ້ ມີຈຸດປະສົງສ້າງຂຶ້ນເພື່ອການສຶກສາ. ສະນັ້ນ, ຈຶ່ງສະຫງວນລິຂະສິດທັງໝົດ, ຫ້າມເຮັດຊ້ຳ, ດັດແປງ, ຈັດພິມຈຳໜ່າຍ ຫຼື ເຜີຍແຜ່ສ່ວນໃດສ່ວນໜຶ່ງຂອງເອກະສານສະບັບນີ້ ບໍ່ວ່າຈະເປັນໃນຮູບແບບ ຫຼື ວິທີໃດ ກໍຕາມ (ລວມທັງການກ໊ອບປີ້ເອກະສານ, ການຖ່າຍຮູບ, ການບັນທຶກສຽງ ຫຼື ດ້ວຍວິທີເອເລັກໂຕນິກອື່ນໆ) ໂດຍບໍ່ໄດ້ຮັບອະນຸຍາດເປັນລາຍລັກອັກສອນຈາກ ໜ່ວຍງານສົ່ງເສີມການພັດທະນາຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ, ຄະນະວິທະຍາສາດປ່າໄມ້, ມະຫາວິທະຍາໄລແຫ່ງຊາດ, ຫ້ອງການສະຫະພັນແມ່ຍິງ ເມືອງ ບໍລະພາ, ແຂວງ ຄຳມ່ວນ ແລະ ໂຄງການ ປົກປັກຮັກສາ ແລະ ນຳໃຊ້ລະບົບນິເວດປ່າໄມ້ແລະ ຊີວະນາໆພັນ ແບບຍືນຍົງ (GIZ ProFEB).

ສະໜັບສະໜຸນໂດຍ:

ປຶ້ມຫົວນີ້ແມ່ນຜົນສຳເລັດທີ່ໄດ້ຈາກກິດຈະກຳ ການສົ່ງເສີມຄວາມເຂັ້ມແຂງຂອງແມ່ຍິງ ໃນການອະນຸລັກຊັບພະຍາກອນທຳມະຊາດ ໃນເຂດອຸທິຍານແຫ່ງຊາດຫີນໝາມໝໍ່ ຈັດຕັ້ງປະຕິບັດໂດຍ ສະຫະພັນແມ່ຍິງເມືອງ ບໍລະພາ ແລະ ພະນັກງານເມືອງຈາກບັນດາຫ້ອງການ ທີ່ກ່ຽວຂ້ອງ ຮ່ວມກັບ ໜ່ວຍງານສົ່ງເສີມການພັດທະນາຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ, ຄະນະວິທະຍາສາດປ່າໄມ້, ມະຫາວິທະຍາໄລແຫ່ງຊາດ ເຊິ່ງໄດ້ຮັບທຶນການສະໜັບສະໜຸນຈາກ ອົງການຮ່ວມມືລາວ-ເຢຍລະມັນ ໂດຍ Deutsche Gesellschaft für Internationale Zusammenarbeit GmbH (GIZ) Global ພາຍໃຕ້ໂຄງການ "ສ້າງຄວາມເຂັ້ມແຂງໃນການຈັດຕັ້ງປະຕິບັດເປົ້າໝາຍຊີວະນາໆ ພັນສາກົນໃນລະດັບຊາດ (GBF Implementation)" ແລະ ໂຄງການ" ປົກປັກຮັກສາ ແລະ ນຳໃຊ້ລະບົບນິເວດປ່າໄມ້ ແລະ ຊີວະນາໆພັນ ແບບຍືນຍົງ" (ProFEB) ຕາງໜ້າໃຫ້ກະຊວງການຮ່ວມມືດ້ານເສດຖະກິດ ແລະ ການພັດທະນາແຫ່ງສະຫະພັນ ເຢຍລະມັນ (BMZ) ສົມທົບທຶນໂດຍ ອົງການຮ່ວມມື ເພື່ອການພັດທະນາຂອງປະເທດນອກແອ (NORAD) ແລະ ຈັດຕັ້ງປະຕິບັດໃນກອບແຜນງານການຮ່ວມມືເພື່ອຈັດຕັ້ງ ປະຕິບັດ ຍຸດທະສາດ ແລະ ແຜນດຳເນີນງານຊີວະນະໆພັນແຫ່ງຊາດ ຫຼື National Biodiversity Strategy and Action Plan (NBSAP).

ຄຳນຳ

ນິທານເລື່ອງ **ສຽງຈາກພູຫີນປູນ** ເປັນນິທານກ່ຽວກັບການປົກປັກຮັກສາຊັບພະຍາກອນທຳມະຊາດ, ສິ່ງແວດລ້ອມ ທີ່ໄດ້ພັນລະນາເຖິງຄວາມສວຍສົດງົດງາມຈາກການເສກສັນປັ້ນແຕ່ງຂອງທຳມະຊາດ ຄຽງຄູ່ກັບການດຳລົງຊີວິດຂອງປະຊາຊົນໃນເຂດມໍລະດົກໂລກທຳມະຊາດຫີນໜາມໜໍ່ ຮ່ວມຊາຍແດນກັບ ອຸທິຍານແຫ່ງຊາດ ຟອງຍາແນບາ ຢູ່ ສາທາລະນະລັດ ສັງຄົມນິຍົມ ຫວຽດນາມ ທີ່ຖືກຮັບຮອງຢ່າງເປັນທາງການໃນວັນທີ 13 ກໍລະກົດ ປີ 2025, ຄວາມງາມທຳມະຊາດທີ່ໂດດເດັ່ນຂອງພື້ນທີ່, ພູມສັນຖານຫີນປູນທີ່ເປັນເອກະລັກໂດດເດັ່ນ ແລະ ຊີວະນາໆພັນທີ່ມີອຸດົມສົມບູນ.

ປຶດນິທານໄດ້ຖ່າຍຖອດເລື່ອງລາວຕ່າງໆ ຜ່ານຕົວລະຄອນໃຫ້ຜູ້ຄົນໄດ້ອ່ານຮູ້ ແລະ ສາມາດຈິນຕະນາການມະໂນພາບເຫັນພື້ນທີ່ປຽບເໝືອນດັ່ງຕົວເອງໄດ້ໄປຢືນໃນຈຸດນັ້ນ, ຜ່ານເລື່ອງເລົ່ານີ້, ຜູ້ອ່ານຈະໄດ້ຮູ້ຈັກກັບຄວາມມະຫັດສະຈັນຂອງມໍລະດົກໂລກທຳມະຊາດຫີນໜາມໜໍ່: ປ່າໄມ້ທີ່ຂຽວສົດງົດງາມ, ສັດປ່າທີ່ຫຼາກຫຼາຍ ແລະ ການພົວພັນທາງວັດທະນະທຳ ລະຫວ່າງ ຊຸມຊົນທີ່ເພິ່ງພາອາໄສທຳມະຊາດ. ນອກຈາກນີ້, ນິທານເລື່ອງນີ້ ຍັງໄດ້ແນະນຳເຂດຄຸ້ມຄອງຕ່າງໆ, ເຊິ່ງເປັນການສະໜັບສະໜູນການນຳໃຊ້ຊັບພະຍາກອນແບບຍືນຍົງ, ຜູ້ອ່ານຈະໄດ້ຮຽນຮູ້ວິທີການທີ່ຄວນປະຕິບັດ ທີ່ເຂົ້າໃຈໄດ້ງ່າຍ ແລະ ສາມາດນຳໃຊ້ໄດ້ຈິງ ເພື່ອຊ່ວຍກັນປົກປັກຮັກສາມໍລະດົກໂລກແຫ່ງນີ້, ລວມທັງການເຄົາລົບເຂດຫ້າມ ແລະ ການນຳໃຊ້ຊັບພະຍາກອນທຳມະຊາດຢ່າງມີຄວາມຮັບຜິດຊອບພາຍໃນເຂດທີ່ໄດ້ກຳນົດໄວ້.

ເລື່ອງລາວນີ້ ເນັ້ນໃສ່ການສົນທະນາລະຫວ່າງເດັກນ້ອຍທີ່ຢາກຮູ້ຢາກເຫັນຄົນໜຶ່ງກັບແມ່ຂອງລາວ, ເຊິ່ງແມ່ກໍໄດ້ອະທິບາຍເຖິງທີ່ມາຂອງ ຄວາມງົດງາມອຸທິຍານທຳມະຊາດຫີນໜາມໜໍ່ ແລະ ເອກະລັກຂອງພື້ນທີ່ ຈົນໄດ້ກາຍເປັນມໍລະດົກໂລກ. ນອກຈາກນັ້ນ ແມ່ຂອງລາວໄດ້ເລົ່າກ່ຽວກັບຖ້ຳ, ສັດ ແລະ ພູມສັນຖານທີ່ເຮັດໃຫ້ພື້ນທີ່ນີ້ພິເສດ, ພ້ອມທັງໃຫ້ຂໍ້ແນະນຳການປະຕິບັດຕົວຢູ່ໃນຊຸມຊົນໃນສິ່ງໃດຄວນເຮັດ ແລະ ສິ່ງໃດບໍ່ຄວນເຮັດ ເພື່ອຊ່ວຍໃນການປົກປັກຮັກສາທຳມະຊາດແຫ່ງນີ້.

ປຶ້ມຫົວນີ້ ແມ່ນເໝາະສົມສຳລັບຄົນທຸກເພດ, ທຸກໄວ ທີ່ສົນໃຈໃນການອະນຸລັກ. ປຶ້ມນີ້ສາມາດຖືກນຳໃຊ້ເພື່ອເຜີຍແຜ່ໃຫ້ນັກຮຽນ, ຄູອາຈານ, ສະມາຊິກຊຸມຊົນ ແລະ ປະຊາຊົນທົ່ວໄປ, ເພື່ອຊ່ວຍສົ່ງເສີມຄວາມຮູ້ ແລະ ສ້າງຈິດສຳນຶກ ໃນການປົກປັກຮັກສາຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມຂອງພວກເຮົາ ຖືເປັນຄວາມຮັບຜິດຊອບຮ່ວມກັນ ແລະ ສາມາດເລີ່ມຕົ້ນໄດ້ຈາກຕົວເຮົາເອງ. ປຶ້ມນິທານຫົວນີ້ ມີຈຸດປະສົງເພື່ອກະຕຸ້ນຈິດສຳນຶກໃຫ້ກັບບັນດານັກຮຽນ ແລະ ຄູອາຈານທ້ອງຖິ່ນ ໃນຊຸມຊົນອ້ອມຮອບ ເຂດຫີນໜາມໜໍ່ ໃຫ້ມີການຮັກ ແລະ ຫ່ວງແຫນມໍລະດົກທາງທຳມະຊາດ ທີ່ເປັນບ້ານເຂົາເຈົ້າ.

ສຽງຈາກພູຫີນປູນ

ເລື່ອງລາວການປົກປັກຮັກສາອຸທິຍານແຫ່ງຊາດຫີນໝາມໝໍ່

ໂດຍແມ່ຍິງ ເມືອງ ບໍ່ລະພາ, ແຂວງ ຄຳມ່ວນ





ມີສອງແມ່ລູກ ທີ່ດຳລົງຊີວິດຢູ່ໃນບ້ານນ້ອຍແຫ່ງໜຶ່ງ ທີ່ຢູ່ໃກ້ໆກັບ ປ່າອຸທິຍານແຫ່ງຊາດຫີນໝາມໝໍ່ ເຊິ່ງລູກສາວຂອງລາວ ເປັນຄົນຂີ້ສົງໃສ ພວກເຂົາໄດ້ມີການດຳລົງຊີວິດ ຊອກຢູ່ - ຫາກິນ ແລະ ເຮັດວຽກນຳໝູ່ບ້ານ ຢ່າງເປັນປົກກະຕິ.



ໃນຕອນແລງມື້ໜຶ່ງ ຫຼັງຈາກລູກສາວໄດ້ກັບມາຈາກໂຮງຮຽນ ກໍມີຄວາມສົງໃສ ແລະ ຄິດກ່ຽວກັບບົດຮຽນທີ່ສາວຄູໄດ້ສອນໄວ້ວ່າ: (ໃຫ້ພວກເຮົາພາກັນ ປົກປັກຮັກສາ ແລະ ຄຸ້ມຄອງປ່າຫີນໜາມໜໍ່ ໃຫ້ຍືນຍົງ) ເຊິ່ງລາວມາຮອດເຮືອນກໍໄດ້ສົນທະນາກັບແມ່ວ່າ:

ນາງ ນ້ອຍ: ແມ່ໆ....! ປ່າໄມ້ບ້ານເຮົານີ້..... ມັນກໍມີຄວາມອຸດົມສົມບູນຢູ່ບໍ..... ອີ່ແມ່.....?

ແມ່: ໂທ້.! ມາລະກະຖາມເລີຍນໍ ກະອຸດົມສົມບູນຫັ້ນແຫຼະ ລູກເອີ້ຍ.



ນາງ ນ້ອຍ: ແມ່ ມື້ນີ້ ສາວຄູໄດ້ສອນເລື່ອງ ອຸທິຍານແຫ່ງຊາດຫີນໝາມໜໍ່ ຂອງເຮົາ. ແມ່ຮູ້ບໍ່ ສາວຄູວ່າ ໄດ້ກາຍເປັນມໍລະດົກ
ໂລກທາງທຳມະຊາດແຫ່ງທຳອິດຂອງ ສປປ ລາວ.


ແມ່: ລູກແມ່ນີ້ຮູ້ດີແທ້ ແມ່ໄດ້ຍິນນຳເພິ່ນວ່າຢູ່ ລະລູກຮູ້ບໍ່ວ່າເປັນຫຍັງ ຫີນໝາມໜໍ່ ຈຶ່ງສຳຄັນ?

ນາງ ນ້ອຍ: ອືມ.... ລູກກະບໍ່ໝັ້ນໃຈ ແມ່ເລົ່າສູ່ລູກຟັງແດ່ໄດ້ບໍ?

ແມ່: ຕັ້ງໃຈຟັງເດີ.



ອຸທິຍານແຫ່ງຊາດຫີນໝາມໝໍ່ນີ້ ເປັນປ່າທີ່ມີພູຫີນປູນຍຸກດຶກດຳບັນ, ມີຖ້ຳນ້ຳລອດ ເຊບັ້ງໄຟ ຂະໜາດໃຫຍ່ທີ່ມີນ້ຳໄຫຼຜ່ານ, ມີສາຍນ້ຳໃຕ້ພື້ນດິນທີ່ຊັບຊ້ອນ, ມີປ່າໜາກໜາຍປະເພດ ທັງປ່າດົງດິບ, ປ່າເທິງສັນພູຫີນປູນ ແລະ ມີສັດທີ່ຫາຍາກໜາຍຊະນິດ ຢູ່ໃນຫັ້ນ.



ນາງ ນ້ອຍ: ແມ່ນມີສັດຫຍັງແດ່ຢູ່ໃນຫ້ວຍ?



ແມ່: ມີທັງລີງລົມ ທີ່ໜ້າຕາເປັນຕາຮັກ ແລະ ທີ່ຫາຍາກ.



ມີ ທະນີຂາແດງ ໜ້າສີຂາວ ປົນແດງ ຄືແຕ່ງໜ້າ ອາໄສຢູ່ຕົ້ນໄມ້ໃຫຍ່.



ມີໂຕໂຄ້ງດຳທີ່ມີຕີນໂຕເປັນສີດຳ ແລະ ມີຂົນເທິງຫົວຊີ້ຂຶ້ນເປັນຈອມ ມັກອາໄສຢູ່ຕາມຜາຫີນປູນ
ຖ້າເບິ່ງບໍ່ຄັກຈະບໍ່ຮູ້ວ່າແມ່ນໂຕຫຍັງ.



ມີນົກກົກຄໍຄ່ຳທີ່ໂຕໃຫຍ່ ປີກກວ້າງ, ບິນສຽງດັງ, ເປັນສັດທີ່ຮັກດຽວໃຈດຽວ.



ນອກນັ້ນຍັງມີ ເຈຍເປັນພັນໆໂຕ ທີ່ອາໄສຢູ່ໃນຖ້ຳ ພວກມັນຈະມັກອອກຈາກຖ້ຳຕອນຄ່ຳຍແລງເບິ່ງຄືຝູງຄວັນທີ່ຢູ່ເທິງຟ້ຳ.



ແມ່: ນອກນັ້ນຍັງມີ "ກວານ" ໃນເຂດອຸທິຍານກໍຄືບ້ານຂອງສັດປ່າ, ພືດປ່າ ແລະ ຊີວະນາໆພັນຫຼາກຫຼາຍຊະນິດ.

ນາງນ້ອຍ: ຄືມາເປັນຕາອອນຊອນແທ້ ແມ່ເອີຍ!

ແມ່: ແມ່ນແລ້ວລູກເອີຍ! ດັ່ງນັ້ນ, ພວກເຮົາຄວນຊ່ວຍກັນດູແລຮັກສາ.



ແມ່: ບໍ່ສົ່ງເສີມການລ່າສັດປ່າ ແລະ ພືດປ່າທີ່ຫາຍາກທີ່ເພີ່ນສະຫງວນ, ບໍ່ຖົ້ມຂີ້ເຫຍື້ອໃນປ່າ.



ຫາປາໃນເຂດ ແລະ ລະດູການທີ່ເພີ່ນອະນຸຍາດ.



ເຂົ້າໄປຫາກິນຕາມເຂດທີ່ເພີ່ນກຳນົດໃຫ້ ແລະ ເວລາເຂົ້າປ່າ ບໍ່ຄວນໃຊ້ສຽງດັງເພາະຈະລົບກວນສັດປ່າ.



ນາງນ້ອຍ: ລະເວລາເຮົາເຂົ້າໄປຫາໝໍ່ໄມ້ ແລະ ເຫັດເດ ແມ່ ?

ແມ່: ເຮົາກະໄປຫາໃນເຂດຄຸ້ມຄອງນຳໃຊ້ທີ່ເພີ່ນຈັດສັນໄວ້ໃຫ້ ແຕ່ຕ້ອງຮູ້ຈັກເກັບແຕ່ພໍດີ ເກັບສະເພາະຍອດທີ່ອອກແລ້ວ ບໍ່ຖອນທັງຮາກ ແລະ ເກັບແຕ່ພໍກິນ, ພໍຂາຍ ນຳໃຊ້ໃນຄົວເຮືອນ. ບໍ່ຕັດໂຄນທັງຕົ້ນ ຫຼື ທຳລາຍແຫຼ່ງທີ່ຢູ່ ແລະ ແຫຼ່ງອາຫານຂອງສັດປ່າ.



ນາງນ້ອຍ: ຖ້າເຮົານຳໃຊ້ລຳໄມ້ໄຜ່ເດ ເຮົາຈະໃຊ້ແນວໃດ?


ແມ່: ເຮົາຄວນເລືອກຕັດເອົາລຳທີ່ມັນຢູ່ດ່ຽວ ແລະ ມີອາຍຸ 3-5 ປີຂຶ້ນໄປ (ໃຫ້ສັງເກດສີຂອງລຳໄມ້ໄຜ່ ຈະເປັນສີຂຽວເຂັ້ມ ແລະ ມີໝອກສີຂາວ)

ນາງນ້ອຍ: ລູກຊິຈື່ຄຳທີ່ແມ່ສອນໄວ້ ເພື່ອໄປບອກໝູ່ຢູ່ໂຮງຮຽນຕໍ່.



ແມ່: ດີຫຼາຍລູກເອີຍ ອຸທິຍານແຫ່ງຊາດຫີນໝາມໝໍ່ ຂອງພວກເຮົາບໍ່ແມ່ນພຽງແຕ່ເປັນປ່າທີ່ຢູ່ຂ້າງບ້ານເຮົາ ແຕ່ຍັງເປັນຊັບສົມບັດອັນລ້ຳຄ່າຂອງຊາດ ແລະ ເປັນມໍລະດົກຂອງໂລກ ທີ່ລູກຫຼານທົ່ວປະເທດ ແລະ ທົ່ວໂລກຢາກມາເຫັນ. ດັ່ງນັ້ນ, ພວກເຮົາທຸກຄົນຕ້ອງເປັນຜູ້ປົກປັກຮັກສາທຳມະຊາດ.

"ສຽງຈາກພູຫີນປູນ ບໍ່ເຄີຍງຽບ ຖ້າພວກເຮົາຕັ້ງໃຈຟັງທຸກຄົນຄືພະລັງໃນການອະນຸລັກ ຈົ່ງພ້ອມກັນຮັກສາປ່າໄມ້ປຽບເໝືອນເຮົາຮັກສາຫົວໃຈຂອງເຮົາ".




ຄູ່ມືການນຳໃຊ້
ຊຸບພະຍາກອນທຳມະຊາດ ແບບຍືນຍົງ

ປົດຮຽນຈາກການສຳພາດແມ່ຍິງ ຈາກ 5 ບ້ານ ຄື: ບ້ານ ຈະລຸ, ບ້ານ ຫຍ້າແວດ,
ບ້ານ ຂະຍູ້, ບ້ານ ວັງມະເນີ ແລະ ຄຸ້ມ ສະລ່າງ,
ເມືອງ ປົວລະພາ, ແຂວງ ຄຳມ່ວນ.

ເຄື່ອງມືການຫາປາ

ໃຊ້ໄດ້

ຫ້າມໃຊ້



ເບັດ

ສະຫວີງ





ມອງ



ຢາເບື່ອ



ລະເບີດ



ໝໍ້ຊ໊ອດ



ສະດຸ້ງ



ແຫ



ສຸ່ມ




ແຫຍງ



ໜ້າກາກດຳປາ



ໜ້າເກັກ



ການໃຊ້ເຄື່ອງມືຫາແບບຖືກວິທີ

- ທ່ານຄວນໃຊ້ເຄື່ອງມືແບບວິຖີຊີວິດຊາວບ້ານ ເຊັ່ນ: ເບັດ, ສະຫວີງ, ສະດຸ້ງ, ມອງ, ແຫຍງ, ສຸ່ມ ແລະ ແຫ ເຊິ່ງເປັນເຄື່ອງມືທີ່ປະຖົມປະຖານ ແລະ ບໍ່ເປັນອັນຕະລາຍຕໍ່ສັດນ້ຳ ເຮັດໃຫ້ເຮົາມີອາຫານໄວ້ກິນຕະຫຼອດໄປ.

  (***ໝາຍເຫດ:*** ມອງ ແລະ ດາງ ໃຫ້ໃຊ້ຂະໜາດທີ່ຫ່າງ ເນື່ອງຈາກເວລາທີ່ໃຊ້ຫາປາ ຈະມີປ່ອງເພື່ອໃຫ້ປານ້ອຍໄດ້ລອດຜ່ານ ແລະ ປ່ອຍໃຫ້ ມັນໄດ້ຈະເລີນເຕີບໂຕຕໍ່ໄປ).

- ທ່ານບໍ່ຄວນໃຊ້ອຸປະກອນທີ່ເກືອດຫ້າມທຸກຊະນິດ ເຊັ່ນ: ຢາເບື່ອ, ລະເບີດ, ໝໍ້ຊ໊ອດ, ໜ້າກາກດຳນ້ຳ, ໜ້າເກັກ (ປືນ), ເນື່ອງຈາກ ອຸປະກອນດັ່ງກ່າວ ເປັນອັນຕະລາຍຕໍ່ຊີວິດຂອງທ່ານ, ຊີວິດຂອງສັດນ້ຳ, ເປັນພິດຕໍ່ສິ່ງແວດລ້ອມ. ນອກນັ້ນ, ຍັງຜິດຕໍ່ກັບລະບຽບກົດໝາຍ.

  ໝາຍເຫດ:

  - **ຢາເບື່ອ:** ຈະກໍ່ໃຫ້ເກີດມີສານພິດຕົກຄ້າງຢູ່ໃນໂຕປາ, ສັດ ທຸກຊະນິດທີ່ອາໄສຢູ່ໃນນ້ຳ ແລະ ແຫຼ່ງນ້ຳ ມີຜົນກະທົບສະທ້ອນກັບຄືນ ສູ່ຄົນເຮົາ ເຮັດໃຫ້ເກີດເປັນໂລກພູມແພ້ ແລະ ໂລກຜິວໜັງຕ່າງໆ...);
  - **ລະເບີດ:** ເຮັດໃຫ້ເສຍທາງດ້ານຄວາມສົມດຸນຂອງສະພາບແວດລ້ອມ (ໂຄງສ້າງຂອງດິນ), ທີ່ຢູ່ອາໄສຂອງສັດນ້ຳ: ພືດຢູ່ແຄມນ້ຳ ແລະ ໃນບໍລິເວນດັ່ງກ່າວອາດສູນຫາຍໄປ;
  - **ໝໍ້ຊ໋ອດ:** ເປັນອັນຕະລາຍຕໍ່ຊີວິດຂອງຄົນເຮົາ ອາດເຮັດໃຫ້ຕາຍໄດ້, ຖ້າໃຊ້ກັບປາໂຕທີ່ຍັງລອດຊີວິດ ກໍຈະເຮັດໃຫ້ເປັນໝັນ ບໍ່ສາມາດແຜ່ພັນໄດ້.

ວິທີການຫາແບບຍືນຍົງ



ເດືອນ											
1	2	3	4	5	6	7	8	9	10	11	12





ກົບຈຳສົມ (ເຂົ້າເບ້ົາ)



ກົບແມ່ໄຂ່



ກົບໂຕ້ນ້ອຍ

ໝາຍເຫດ:

ຫາແດ່ຈິ່ງແດ່

ຫ້າມເດັດຂາດ
(ຮັກສາພໍ່/ແມ່ພັນ)



ການຫາກົບແບບຍືນຍົງ

- ຫຼີກລ້ຽງການຫາກົບຕາມປະຕິທິນລະດູການ ໂດຍສະເພາະແມ່ນໃນຊ່ວງທີ່ກົບກຳລັງຈະຂະຫຍາຍພັນ (ໃນຊ່ວງເດືອນ 5 ຫາ ເດືອນ 6);
- ບໍ່ຄວນເອົາກົບແມ່ໄຂ່ ຫຼື ກຳລັງຖືພາ (ມານ) ມາບໍລິໂພກ (ກິນ) ເປັນອາຫານ, ຄວນປະໃຫ້ກົບໄດ້ມີການຂະຫຍາຍພັນ (ອອກ ແມ່ ແຜ່ລູກ) ແລະ ເພີ່ມຈຳນວນປະຊາກອນໃຫ້ຫຼາຍຂຶ້ນ;
- ບໍ່ຄວນເອົາກົບທີ່ກຳລັງເກີດໃໝ່ (ໂຕຮອກ ຫຼື ລູກອ໊ອດ), ກົບໂຕນ້ອຍ (ຂະໜາດນ້ອຍກວ່າ 2 ນິ້ວມື) ມາກິນເປັນອາຫານ ຕ້ອງຈົ່ງໃຫ້ກົບນ້ອຍ ໄດ້ຈະເລີນເຕີບໂຕສາກ່ອນ;
- ໃນເວລາທີ່ກົບຈຳສິນ (ເຂົ້າເບົ້າ) ຄວນຢຸດພັກການຫາ ເພື່ອໃຫ້ກົບໄດ້ມີເວລາໃນການຂະຫຍາຍໂຕ.

ວິທີການຫາແບບຍືນຍົງ

ເດືອນ											
1	2	3	4	5	6	7	8	9	10	11	12













ໝາຍເຫດ: ຫາແດ່ຈຶ່ງແດ່ (ຮັກສາເຊື້ອເຫັດໄວ້)



ການຫາເຫັດແບບຍືນຍົງ

ເຫັດປອກ ມັກເກີດໃນເຂດທີ່ມີດິນຊາຍປົນດິນໜຽວ ຫຼື ດິນຜຸຜຸ່ຍປົນດິນຊາຍ, ມີຄວາມຊຸ່ມຊື່ນຢູ່ຕະຫຼອດ, ດ້ານເທິງໜ້າດິນຈະປົກຄຸມດ້ວຍເສດກິ່ງໄມ້ ແລະ ໃບໄມ້ ຫຼື ຕົ້ນຫຍ້າ ມັກເກີດຢູ່ຕາມບໍລິເວນຮັ້ງປອກເພາະມີຄວາມຊຸ່ມ ແລະ ມີອຸນຫະພູມສູງ ປະມານ 30-35 ອົງສາ ເພື່ອຢາກໃຫ້ມີເຫັດປອກໃຫ້ໄດ້ເກັບກິນໃນແຕ່ລະປີ ເຮົາຄວນປະຕິບັດຕາມຄຳແນະນຳລຸ່ມນີ້:

1). ເຫັດດອກທີ່ຈຸ່ມ (ດອກທີ່ພົ້ນຈາກໜ້າດິນ), ບານພໍປະມານແມ່ນສາມາດເກັບໄດ້ (✓); ສ່ວນດອກທີ່ບານເຕັມທີ່ແລ້ວ (ໃກ້ຈະເນົ່າເປື່ອຍ) ແມ່ນບໍ່ສາມາດຫາໄດ້ (x) ນີ້ກໍເພື່ອຈົ່ງໄວ້ໃຫ້ດອກເຫັດຍ່ອຍສະຫຼາຍ, ເນົ່າເປື່ອຍກາຍເປັນເຊື້ອເຫັດຄືນສູ່ທຳມະຊາດ ຈຶ່ງຈະມີເຫັດໃຫ້ໄດ້ກິນໃນທຸກໆປີ;

2). ໃຊ້ມືດຶງ ຫຼື ເດັດ, ໃຊ້ມີດ ຫຼື ໄມ້ຈີ້ມເອົາເບົາໆ (✓); ຫ້າມບໍ່ໃຫ້ໃຊ້ສຽມ, ຊ້ອນ ແລະ ຈີກຂຸດ (x) ເພາະຈະເຮັດໃຫ້ເສຍຄວາມສົມດຸນທາງທຳມະຊາດຂອງເຫັດ ແລະ ຄວາມແຮງຂອງການຂຸດຈະໄປທຳລາຍໂຄງສ້າງຂອງເຫັດທີ່ຢູ່ໃຕ້ດິນ;

3). ບໍ່ຄວນຂຸດ, ເຈາະ ຫຼື ຈີກ ເອົາເຫງົ້າເຫັດ (x) ເພື່ອເອົາໝາກເຫັດທີ່ຢູ່ພົ້ນດິນເພາະຈະເປັນການທຳລາຍເຊື້ອເຫັດ ແລະ ເຮັດໃຫ້ເຫັດດັບສູນໄດ້ (ຖ້າເຮັດແບບນີ້ ພວກທ່ານຈະບໍ່ມີເຫັດໄວ້ໃຫ້ໄດ້ກິນເປັນອາຫານອີກໃນວັນຂ້າງໜ້າ).

ວິທີການຫາແບບຍືນຍົງ



ເດືອນ											
1	2	3	4	5	6	7	8	9	10	11	12



ເລືອກເອົາໂຕໃຫຍ່



ບໍ່ເອົາໂຕແມ່ໄຂ່




ບໍ່ທຳລາຍຖິ່ນອາໄສ



ບໍ່ເອົາໂຕນ້ອຍ

ໝາຍເຫດ: ຫາແດ່ຈຶ່ງແດ່ ຫ້າມເດັດຂາດ (ຮັກສາພໍ່/ແມ່ພັນ)



ການຫາປູແບບຍືນຍົງ

ປູຫາບ ຫຼື ປູຫີນ ເປັນປູສະເພາະຖິ່ນ ມັກອາໄສຢູ່ຕາມລຳຫ້ວຍນ້ອຍ ແລະ ຫ້ວຍໃຫຍ່ ຢູ່ລຽບຕາມພູຜາ ຢູ່ລະດັບຄວາມສູງ ຈາກໜ້ານ້ຳທະເລ 400 - 1,126 ແມັດ, ມັກລີ້ຊ່ອນຢູ່ຕາມຫຼືບຫີນ, ກ້ອງໂງ່ນຫີນ, ຢູ່ໃນດິນ ແລະ ຕາມຊາກໃບໄມ້ໃກ້ແຫຼ່ງນ້ຳ ທັງບໍລິເວນນ້ຳໄຫຼ ແລະ ນ້ຳນິ້ງ ໃນການຈັບ ຫຼື ຫາປູດັ່ງກ່າວມາເປັນອາຫານຄວນຫາແບບຖືກວິທີ ເພື່ອໃຫ້ເຮົາມີປູໄດ້ກິນຕະຫຼອດ ດັ່ງລາຍລະອຽດລຸ່ມນີ້:

- ຄວນຄັດເລືອກເອົາໂຕທີ່ມີຂະໜາດ ກາງ - ໃຫຍ່ ຫຼື ໂຕທີ່ໃຫຍ່ເຕັມໄວ ເພື່ອມາບໍລິໂພກ ປຸງແຕ່ງເປັນອາຫານ;
- ປູໂຕທີ່ຍັງນ້ອຍຫຼາຍ (ຂະໜາດ 2 ນິ້ວມືລົງມາ) ບໍ່ຄວນເອົາມາກິນ, ຈັບອອກມາຈາກປ່າ ຫຼື ທີ່ຢູ່ອາໄສຂອງມັນ, ເຮົາຄວນຈຶ່ງໄວ້ໃຫ້ມັນຂະຫຍາຍຕົວ ແລະ ເຕີບໃຫຍ່ເສຍກ່ອນ;
- ບໍ່ຄວນຫາ ຫຼື ຈັບເອົາໂຕແມ່ໄຂ ໃນຊ່ວງທີ່ປູກຳລັງແຜ່ພັນ, ຄວນມີການຍົກເວັ້ນ ແລະ ຈຶ່ງໄລຍະເວລາການຫາໄວ້ ເພື່ອໃຫ້ປູ ໄດ້ມີການແຜ່ຂະຫຍາຍພັນ (ອອກແມ່ແຜ່ລູກ) ໃຫ້ຫຼາຍຂຶ້ນ;
- ບໍ່ທຳລາຍຖິ່ນທີ່ຢູ່ອາໄສຂອງປູ ເພາະຈະເປັນການລົບກວນ, ທຳລາຍແຫຼ່ງອາຫານ, ເຮືອນຮັງ ແລະ ທີ່ຢູ່ອາໄສຂອງປູ ອີກທັ້ງຍັງຈະເຮັດໃຫ້ປູຍ້າຍທີ່ຢູ່ ຫຼື ອາດຈະນຳໄປສູ່ການສູນພັນ (ດັບສູນ) ໄດ້.

ວິທີການຫາແບບຍືນຍົງ

ເດືອນ											
1	2	3	4	5	6	7	8	9	10	11	12



ເລືອກເອົາໂຕໃຫຍ່



ບໍ່ເອົາໂຕນ້ອຍ

ບໍ່ທຳລາຍລະບົບນິເວດ





ໝາຍເຫດ: ຫາແດ່ຈຶ່ງແດ່ ຫ້າມເດັດຂາດ (ຮັກສາພໍ່/ແມ່ພັນ)



ການຫາຫອຍແບບຍືນຍົງ

ຫອຍຫອມ ມັກອາໄສຢູ່ຕາມພື້ນດິນທີ່ມີຄວາມຊຸ່ມຊື່ນ ຫຼື ບໍລິເວນທີ່ເປັນປ່າຕຶບໃຫຍ່ທີ່ໃຫ້ຄວາມຊຸ່ມຊື່ນໄດ້ດີ, ຢູ່ຕາມບໍລິເວນໃກ້ກັບພູຫີນປູນ, ໃນລະດູຝົນ ຫອຍ ມັກເກາະຈັບຢູ່ຕາມຊາກໄມ້, ໃບໄມ້ ເພື່ອຊ່ວຍໃນການຍ່ອຍສະຫຼາຍຊາກໄມ້ - ໃບໄມ້, ຊ່ວຍເພີ່ມອິນຊີ (ຝຸ່ນ) ໃຫ້ແກ່ດິນ, ໃນລະດູແລ້ງ ຈະຈຳສີນຢູ່ໃນຖ້ຳ (ພື້ນດິນ). ໃນປັດຈຸບັນ ຫອຍຊະນິດດັ່ງກ່າວມີຄວາມສ່ຽງທີ່ຈະດັບສູນ (ສູນພັນ) ເພື່ອບໍ່ໃຫ້ ຫອຍ ດັບສູນໄປຈາກບ້ານຂອງພວກເຮົາ ຄວນປະຕິບັດດັ່ງນີ້:

- ຄັດເລືອກເອົາໂຕທີ່ມີຂະໜາດ ກາງ-ໃຫຍ່ ຫຼື ໂຕທີ່ໃຫຍ່ເຕັມໄວເພື່ອມາປຸງແຕ່ງອາຫານ;
- ບໍ່ຄວນເອົາໂຕທີ່ຍັງນ້ອຍຫຼາຍມາບໍລິໂພກ (ກິນ), ຈົ່ງໂຕທີ່ນ້ອຍໄວ້ເພື່ອໃຫ້ມັນໄດ້ຈະເລີນເຕີບໃຫຍ່ ແລະ ຂະຫຍາຍໂຕເຕັມໄວສາກ່ອນ ບໍ່ຄວນທຳລາຍຖິ່ນທີ່ຢູ່ອາໄສຂອງຫອຍ ດ້ວຍການຈູດ, ຖາງ ເພາະຈະເປັນການລົບກວນສະພາບແວດລ້ອມ, ທີ່ຢູ່ອາໄສຂອງຫອຍ ແລະ ຍັງເປັນການທຳລາຍແຫຼ່ງອາຫານຂອງຫອຍອີກດ້ວຍ;
- ຄວນມີການຈົ່ງໄລຍະເວລາການຫາໄວ້ ຕາມປະຕິທິນລະດູການ ເພື່ອໃຫ້ຫອຍໄດ້ມີເວລາໃນການເພາະພັນ ແລະ ອອກແມ່ແຜ່ລູກ (ຂະຫຍາຍຈຳນວນປະຊາກອນໃຫ້ຫຼາຍຂຶ້ນ).



ວິທີການຫາແບບຍືນຍົງ



ເດືອນ											
1	2	3	4	5	6	7	8	9	10	11	12


ເອົາກາຍຕາຂອງໜໍ່





ບໍ່ເອົາເຫງົ້າ

ບໍ່ໃຊ້ລຳອ່ອນ



ໃຊ້ລຳແກ່



ໝາຍເຫດ: ຫາແກ່ຈິ່ງແດ່ (ຈິ່ງໄວ້ໃຫ້ເປັນພໍ່ແມ່ພັນ)



ການຫາໜໍ່ໄມ້ແບບຍືນຍົງ

- **ຄວນເອົາກາຍຕາຂອງໜໍ່:** ໃຫ້ເອົາສ່ວນທີ່ສູງກາຍຕາຂອງໜໍ່ຂຶ້ນໄປ (ຈົ່ງຕາຂອງໜໍ່ທີ່ຕິດກັບເຫງົ້າໜໍ່ໄວ້ປະມານ 1-2 ຕາ) ເພື່ອໃຫ້ໜໍ່ໄດ້ແຕກໜໍ່ ແລະ ແໜງຂະຫຍາຍອອກໄປຕື່ມ;
- ບໍ່ຄວນຂຸດ ຫຼື ສັບເອົາໜໍ່ທີ່ສັ້ນຈົນເກີນໄປ (ໜໍ່ທີ່ຍັງເປັນປຸດ) ເພາະຈະເຮັດໃຫ້ໜໍ່ບໍ່ມີໂອກາດໄດ້ຂະຫຍາຍພັນ;
- **ສຳລັບການນຳໃຊ້ລຳຂອງໜໍ່ໄມ້:** ບໍ່ຄວນເອົາລຳທີ່ອ່ອນຫຼາຍ (ລຳທີ່ຫາກໍ່ເປັນໃນຊ່ວງ 1 - 2 ປີ) ຫຼື ມີຂຽວອ່ອນ (ຂຽວຍອດຕອງ), ຄວນເລືອກຕັດເອົາລຳທີ່ແກ່ ຫາ ປານກາງ (ລຳທີ່ມີອາຍຸແຕ່ 3 - 5 ປີຂຶ້ນໄປ) ຫຼື ມີສີຂຽວເຂັ້ມຫາ ສີນ້ຳຕານ ເພາະວ່າລຳຂອງໜໍ່ໄມ້ໃນຊ່ວງອາຍຸດັ່ງກາວ ແມ່ນຈະໃຫ້ຜົນຜະລິດໜໍ່ທີ່ໜ້ອຍລົງ ຖ້າເຮົາບໍ່ຕັດ ຫຼື ຮອນອອກ ລຳໄຜ່ດັ່ງກ່າວກໍຈະຕາຍຢືນຕົ້ນໄປ. ສະນັ້ນ, ເຮົາຄວນ ຮັກສາລຳໄຜ່ທີ່ເກີດໃໝ່ໄວ້ໃນຊ່ວງອາຍຸ ແຕ່ 1 - 3 ປີ ເພາະຈະໃຫ້ຜົນຜະລິດທີ່ດີ ພ້ອມທັງອອກໜໍ່ໃຫ້ເຮົາໄດ້ກິນ ແລະ ນຳໃຊ້ໄປ ຕະຫຼອດຈົນຮອດລູກ - ຫຼານຂອງພວກເຮົາ.

ວິທີການຫາ ສານ ແບບຍືນຍົງ








ເລືອກເອົາຫໍ່ໃຫຍ່

ເດືອນ											
1	2	3	4	5	6	7	8	9	10	11	12



ບໍ່ເອົາຫໍ່ທີ່ນ້ອຍ



ບໍ່ໃຫ້ຂຸດເອົາເຫງົ້າ

ໝາຍເຫດ: ຫາແຕ່ຈຶ່ງແດ່ (ຈຶ່ງບໍ່ໃຫ້ເຫຼືອພໍ່ແມ່ພັນ)



ການຫາ "ສານ" ແບບຍືນຍົງ

- ຄວນປະຕິບັດຕາມປະຕິທິນລະດູການໂດຍການຫາແດ່ ແລະ ຈົ່ງແດ່;
- ຄວນປະໃຫ້ມັນຂະຫຍາຍຕົວໃຫຍ່ຂຶ້ນຕື່ມອີກສາກ່ອນ;
- ຄວນຄັດເລືອກເອົາໜໍ່ທີ່ຕຸ້ຍ, ອວບ ແລະ ໃຫຍ່ດີ;
- ບໍ່ຄວນເອົາໜໍ່ທີ່ນ້ອຍຫຼາຍຈົນເກີນໄປ.
- ບໍ່ຄວນຕັດຕົ້ນສານຖ້ຈົນເກີນໄປ ເພາະຈະເຮັດໃຫ້ຕົ້ນສານແຕກເປັນກໍບໍ່ທັນ ອາດເຮັດໃຫ້ຕົ້ນສານເກີດການເນົ່າເປື່ອຍ ແລະ ຕາຍໄດ້;
- ບໍ່ຄວນຂຸດ ຫຼື ກົ່ນ ເອົາເຫງົ້າຕົ້ນສານອອກມາຈາກປ່າ ເພື່ອໄປເພາະປູກ ແລະ ຂະຫຍາຍພັນ ເພາະຈະເຮັດໃຫ້ປະລິມານຕົ້ນສານທີ່ຢູ່ໃນປ່າມີຈຳນວນຫຼຸດນ້ອຍລົງ ແລະ ອາດນຳໄປສູ່ການດັບສູນໄດ້.

ຄຳແນະນຳເພີ່ມເຕີມ: ຄວນມີການຈັດແບ່ງເຂດ ໃນການຫາໂດຍໃຊ້ການເຮັດຮອບວຽນເຊັ່ນ: ໄລຍະເວລາ 2-3 ປີ ຈຶ່ງໝຸນເປັນຮອບວຽນ ເພື່ອໃຫ້ສານມີຄວາມຍືນຍົງ ແລະ ມີໜໍ່ສານໃຫຍ່ໆ ສາມາດເກັບໃນທຸກໆປີ.

ການນຳໃຊ້ນ້ຳເຜິ້ງປ່າແບບຍືນຍົງ


ເດືອນ											
1	2	3	4	5	6	7	8	9	10	11	12



ເຜິ້ງສາ
ເຜິ້ງເກ່ ເຜິ້ງເກ່



ໃຊ້ຄວນນ້ອຍໆ



ໃຊ້ວິທີແບບພື້ນບ້ານ

ຫຼີກລ່ຽງການທຳລາຍ ຫລື ເຜົາຮັງທັງໝົດ



ໂກນ



ຮັງ



ໄຟຈູດ



ຮັງອ່ອນ



ການເກັບນ້ຳເຜິ້ງ ແບບຍືນຍົງ

ເຜິ້ງ: ມີຄວາມສຳຄັນຕໍ່ລະບົບນິເວດທາງທຳມະຊາດ, ເປັນຕົວແຜ່ກະຈາຍເກສອນພືດ ຊ່ວຍເຮັດໃຫ້ເກີດການປະສົມພັນຂອງພືດໃນປ່າ, ການກະເສດ, ຄວາມສົມດຸນຂອງລະບົບນິເວດ ແລະ ການຢູ່ລອດຂອງມະນຸດແມ່ນຂຶ້ນຢູ່ກັບເຜິ້ງ.

ການໃຊ້ສານເຄມີ, ຢາຂ້າແມງໄມ້ ແລະ ປຸ໋ຍເຄມີຢ່າງຫຼວງຫຼາຍໃນພື້ນທີ່ການກະສິກຳ, ເຮັດໃຫ້ເຜິ້ງຕາຍຍົກຮັງ, ການປ່ຽນພື້ນທີ່ປ່າເປັນພື້ນທີ່ການກະເສດປູກພືດຊະນິດດຽວ ເຮັດໃຫ້ເຜິ້ງຄ່ອຍໆຫາຍໄປໃນລະບົບນິເວດ, ຂາດຕົວກາງ ໃນການປະສົມເກສອນດອກໄມ້ໃຫ້ຈິ່ງເຮັດໃຫ້ພືດບໍ່ເກີດຜົນຜະລິດ ລວມໄປເຖິງບໍ່ມີດອກໄມ້ ແລະ ພັນໄມ້ໃນປ່າ, ເຮັດໃຫ້ປ່າໄມ້ບໍ່ມີຄວາມອຸດົມສົມບູນ.

ຫຼັກການປະຕິບັດນຳໃຊ້ນ້ຳເຜິ້ງປ່າແບບຍືນຍົງ - ຂໍ້ແນະນຳທີ່ສຳຄັນ

- **ເກັບພຽງແຕ່ນ້ຳເຜິ້ງສຸກ ຫຼື ເຜິ້ງແກ່:** ນ້ຳເຜິ້ງສຸກຈະຫຸ້ມດ້ວຍຂີ້ເຜິ້ງ, ນ້ຳເຜິ້ງມີຄວາມໜຽວມີສີເຂັ້ມ, ມີກິ່ນຫອມ ແລະ ສາມາດເກັບໄວ້ໄດ້ດົນ;
- **ບໍ່ເຜົາຮັງ ຫຼື ຕັດຮັງທັງໝົດ:** ຫຼີກລ່ຽງການຈູດໄຟເພື່ອໄລ່ເຜິ້ງເພາະວ່າມັນຈະທຳລາຍຮັງ ແລະ ເຜິ້ງທັງໝົດ, ຕັດເອົາແຕ່ ສ່ວນນ້ຳເຜິ້ງ, ປ່ອຍສ່ວນທີ່ມີໄຂ ຫຼື ຕົວອ່ອນໃຫ້ເຜິ້ງໃຊ້ໄດ້ອີກຄັ້ງ;
- **ເວັ້ນຊ່ວງເວລາໃນການເກັບນ້ຳເຜິ້ງ:** ບໍ່ຄວນເກັບນ້ຳເຜິ້ງຈາກຮັ່ງເກົ່າເລື້ອຍເກີນໄປ, ຄວນໃຫ້ເວລາເຜິ້ງທີ່ຈະຟື້ນຕົວ ແລະ ຜະລິດໃໝ່, ເກັບປີລະ 1-2 ຄັ້ງ ໂດຍສັງເກດລະດູການທີ່ເຜິ້ງມີຄວາມອຸດົມສົມບູນ ຢ່າເກັບນ້ຳເຜິ້ງໃນຂະນະທີ່ເຜິ້ງກຳລັງຜະລິດນ້ຳເຜິ້ງ ຫຼື ອອກຕົວອ່ອນ.


ປະຕິທິນລະດູການ ແນະນຳການໃຊ້ຊັບພະຍາກອນ

ຊະນິດພັນ	ເດືອນ											
	1	2	3	4	5	6	7	8	9	10	11	12
 ປາຄໍ່												
 ປາກົດ												
 ປາເຊືອມ												
 ປາຫຼັງໜາມ												
 ປາສຸດ												
 ປາກັ້ງ												
 ປາຈາດ												
 ປາຊິວ												
 ກົບ												
 ອຶ່ງ												
 ຂຽດເຫລືອງ												
 ຂຽດຕະປາດ												
 ຂຽດນ້ອຍ												
 ຂຽດແມ່ໜາວ												

ຊະນິດພັນ	ເດືອນ											
	1	2	3	4	5	6	7	8	9	10	11	12
 ຂຽດນາ												
 ລູກຄຸ້ມ												
 ກຸ້ງ												
 ປູແດງ												
 ປູນາ												
 ປູຫາບ												
 ປູຄາຍ												
 ຫອຍໂข้												
 ຫອຍແດງ												
 ຫອຍຫອມ												
 ຫອຍຈຸบ												
 ຫອຍປັ້ງ												
 ຫອຍຊາย												
 ຫอยภาบภี้												

ໝາຍເຫດ: ຊ່ວງຫາໄດ້ ຫາແດ່ຈຶ່ງແດ່ (ຮັກສາພໍ/ແມ່ພັນ) ຫ້າມເດັດຂາດ

ປະຕິທິນລະດູການ ແນະນຳການໃຊ້ຊັບພະຍາກອນ

ຊະນິດພັນ		ເດືອນ											
		1	2	3	4	5	6	7	8	9	10	11	12
ກະຮອກ													
ກະແຕ													
ນົກເຂົາ													
ນົກເປົ້າ													
ນົກກົດ													
ນົກກະເຕັ້ນ													
ນົກກະຈອກ													
ໜູຫວາຍ													
ໜໍ່ໄມ້ໄຜ່ປ່າ													
ໜໍ່ໄມ້ໄລ່													
ໜໍ່ໄມ້ຜາງ													

ຊະນິດພັນ		ເດືອນ											
		1	2	3	4	5	6	7	8	9	10	11	12
ໜໍ່ໄມ້ແທ້													
ໜໍ່ໄມ້ບົ່ງ													
ໜໍ່ກະແສນ													
ຜັກກູດ													
ຜັກຫວານ													
ຜັກຫນາມ													
ຜັກຂົມ													
ຜັກເຮືອເຫາະ													
ຜັກໃສ່													
ຜັກກຸ່ມ													
ໜໍ່ສານ													

ໝາຍເຫດ: ຊ່ວງຫາໄດ້ ຫາແຕ່ຈີ່ງແດ (ຮັກສາພໍ່/ແມ່ພັນ) ຫ້າມເດັດຂາດ

ປະຕິທິນລະດູການ ແນະນຳການໃຊ້ຊັບພະຍາກອນ

ຊະນິດພັນ		ເດືອນ											
		1	2	3	4	5	6	7	8	9	10	11	12
ຕາວໃຫ່ຍ													
ບຸ່ນ													
ຫວາຍ													
ໜ່ແຂມ													
ໜ່ເລົ່າ													
ຍອດຄອນແຄນ													
ດອກຈະໂກບ													
ດອກກະຈຽວ													
ດອກປີ້ກິ່ນ													
ເຫັດປອກ													
ເຫັດບິດ													

ຊະນິດພັນ		ເດືອນ											
		1	2	3	4	5	6	7	8	9	10	11	12
ເຫັດຂາວ													
ເຫັດລະໂງກ													
ເຫັດເຜາະ													
ເຫັດເຜິ້ງ													
ເຫັດກະຕ່ໍ													
ເຫັດນົກກີ້													

ໝາຍເຫດ: ຊ່ວງຫາໄດ້ ຫາແດ່ຈຶ່ງແດ່ (ຮ້ຳສາພໍ/ແມ່ພັນ) ຫ້ຳມເດ້ດຂາດ

Technically and financially supported by the GIZ Global Project “Strengthening National Implementation of Global Biodiversity Targets” (GBF Implementation) and the GIZ Project Protection and Sustainable Use of Forest Ecosystems and Biodiversity (ProFEB), on behalf of the German Federal Ministry for Economic Cooperation and Development (BMZ), co-funded by the Norwegian Agency for Development Cooperation (NORAD), and implemented under the framework of the NBSAP Accelerator Partnership.

ໂດຍໄດ້ຮັບການສະໜັບສະໜູນດ້ານວິຊາການ ແລະ ທຶນຈາກ GIZ Global ພາຍໃຕ້ໂຄງການ “ສ້າງຄວາມເຂັ້ມແຂງໃນການຈັດຕັ້ງປະຕິບັດເປົ້າໝາຍຊີວະນາໆພັນສາກົນໃນລະດັບຊາດ (GBF Implementation)” ແລະ ໂຄງການ “ປົກປັກຮັກສາ ແລະ ນຳໃຊ້ ລະບົບນິເວດປ່າໄມ້ ແລະ ຊີວະນາໆພັນແບບຍືນຍົງ” (ProFEB) ຕາງໜ້າໃຫ້ກະຊວງການຮ່ວມມືດ້ານເສດຖະກິດ ແລະ ການພັດທະນາເທ່ງສະຫະພັນ ເຢຍລະມັນ (BMZ) ສົມທົບທຶນໂດຍ ອົງການຮ່ວມມືເພື່ອການພັດທະນາຂອງປະເທດນອກເອ (NORAD) ແລະ ຈັດຕັ້ງປະຕິບັດໃນກອບແຜນງານການຮ່ວມມືເພື່ອຈັດຕັ້ງປະຕິບັດ NBSAP.





NREP

german cooperation
DEUTSCHE ZUSAMMENARBEIT

Co-funded by
Norway

Implemented by
giz Deutsche Gesellschaft für Internationale Zusammenarbeit (GIZ) GmbH

As part of
NBSAP accelerator partnership